ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔ງງ/ປພຖຊ/໐໑໐໑໔໐໑໐**

# ສານອວຍພອນປີໃໝ່ 2010

ເນື່ອງໃນໂອກາດປີໃໝ່ສາກົນ 2010 ນີ້, ໃນນາມ ຂອງພວກເຮົາ ປະຊາຊົນພັກ ແລະກຳລັງທັບ ເສຣີປະຊາທິປະໄຕລາວ ແລະໃນນາມ ຂອງຂ້າພະເຈົ້າເອງ, ຂໍອວຍໄຊຍ໌ໃຫ້ພອນ ແກ່ບັນທ່ານ ຕລອດ ຮອດພໍ່ແມ່ພີ່ນ້ອງປະຊາຊົນລາວ ທັງໃນແລະນອກປະເທດ ຈົ່ງມີສຸຂພາບແຂງແຮງດີ, ມີຄວາມມ່ວນຊື່ນ ເບີກບານຕ້ອນຮັບປີໃໝ່ ແລະມີຄວາມສຳເຣັດໃນໜ້າທີ່ການງານ ຂອງທຸກໆທ່ານດ້ວຍເຖີ້ນ.

ພວກເຮົາ ຂໍຖືໂອກາດເອົາວັນສຳຄັນອັນນີ້, ອວຍໄຊຍ໌ໃຫ້ພອນ ແກ່ຄນະພັກຣັຖບານ ສປປລາວ. ແລະບັນດານັກການທູດທຸກໆທ່ານ ທີ່ກຳລັງປະຕິບັດ ພາຣະກິດຊາດ ຢູ່ໃນຕ່າງປະເທດ... ຈົ່ງມີສຸຂພາບ ແຂງແຮງດີແລະຈົ່ງໄດ້ຮັກສາ ນ້ຳໃຈຮັກຊາດ -ສາກົນກຳມະຊົນ ຢ່າໃຫ້ຈືດຈາງ, ເພາະມີແຕ່ ນ້ຳໃຈຮັກຊາດ ແລະສາກົນກັມະຊົນເທົ່ານັ້ນ ຈຶ່ງຈະນຳພາຊາດ ອອກຈາກພັຍພິບັດໄດ້.

ເຖິງແມ່ນວ່າ, ປີເກົ່າ 2009 ໄດ້ຜ່ານໄປ, ແຕ່ມັນກໍເປັນປີ ທີ່ມີຄວາມໝາຍປວັດສາດ ເພາະມັນ ເປັນປີ ແຫ່ງ ໄຊຊນະ ໃນການປ້ອງບັນຫາລາວ ເຂົ້າສູ່ເວທີສາກົນ ໄດ້ຢ່າງສຳເຣັດຜົນ. ເຮັດໃຫ້ບັນດາ ປະເທດເພື່ອນມິຕ ໃນທົ່ວໂລກ ຫັນໜ້າເຂົ້າມາ ແກ້ໄຂບັນຫາລາວ ຢ່າງເອົາຈິງ ເອົາຈັງ.

ປະກົດການຫລາຍຢ່າງ ທີ່ທາງ **ສາກົນ** ໄດ້ຈັດຂຶ້ນ ຕາມຂັ້ນຕອນ... ເພື່ອກ້າວໄປສູ່ **ການສ້າງ ຄວາມສາມະຄີປອງດອງຊາດ**; ເປັນຕົ້ນ: -ພັກຣັດ ໄດ້ສເນີການແກ້ໄຂຄວາມຂັດແຍ່ງ **ດ້ວຍການໂອ້ລົມ**

**ເຈລະຈາກັນ ທາງການເມືອງ ຢູ່ໃນກອງປະຊຸມ ຣັຖະສະພາ ຄັ້ງທີ 17 ທີ່ລາວເປັນເຈົ້າພາບ. ຕອນນັ້ນ, ພັກຣັດ ຍັງໄດ້ຮ່ວມຮັບເອົາມະຕິ ກ່ຽວກັບ ການເຄົາຣົບຕໍ່ສິດທິເສຣີພາບ ຂອງພົລເມືອງ ຢູ່ໃນກອງປະຊຸມ ສະມາຄົມອາຊຽນ ຄັ້ງທີ 15 ອີກດ້ວຍ ແລະການເປັນເຈົ້າພາບ ຈັດກອງປະຊຸມ ບັນດາ ຣັຖມົນຕຣີ ຖແລງຂ່າວອາຊຽນ ຄັ້ງທີ 10ເພື່ອເພີ້ມທະວີການຮ່ວມມື ສື່ສານມວນຊົນ ເຂົ້າໃນການກໍ່ສ້າງປະຊາຄົມ ອາຊຽນ.** ອັນນີ້, ມັນກໍເປັນການເປີດໂອກາດ ໃຫ້ນັກຂ່າວຕ່າງປະເທດ ເຂົ້າມາທຳຂ່າວ ທີ່ເກີດຂຶ້ນຢູ່ພາຍໃນ ຂອງປະເທດລາວໄດ້.

ຍິ່ງໄປກວ່ານັ້ນ, ປະກົດການທີ່ບໍ່ມີຜູ້ໃດຄາດຄິດມາກ່ອນ ກໍຄື ປະທານາທິບໍດີອະເມຣິກັນ, ທ່ານ ບາຣັກ ໂອບາມາ ໄດ້ປະກາດວ່າ **"ລາວ ໄດ້ຢຸດເຊົາ ເປັນປະເທດ ມາກຊິສ໌-ເລນິນນິສ ແລ້ວ"** ອັນນີ້, ມັນບໍ່ພຽງແຕ່ ເປັນໄຊຊະນະ ຂອງປະຊາຊົນລາວທັງຊາດເທົ້ານັ້ນ, ມັນກໍຍັງເປັນ ການເສັຽສລະ ອັນໃຫຍ່ຫລວງ ຂອງພັກຣັຖບານສປປລາວ. ຢ່າງໜ້າສັລເສີນອີກດ້ວຍ.

ອະດີດປະທານາທິບໍດີສະຫະຣັດ, ທ່ານ ຈິມມີ ຄາເຕີ ຜູ້ໄດ້ຮັບລາງວັນໂນເບວລ໌ ສັນຕິພາບໂລກ ແລະ ຜູ້ສນັບສນູນ ໃຫ້ຣັຖບານ ເປັນຂອງປະຊາຊົນຢ່າງແທ້ຈິງ, ໄດ້ນຳໜ່ວຍອາສາສມັກ **ເຂົ້າມາ ສ້ອມແປງ ບ້ານເຮືອນ** ໃຫ້ຄົນລາວຜູ້ທຸກຍາກນັ້ນ, ມັນມີຄວາມໝາຍຍິ່ງ, **ເພາະມັນຊີ້ໃຫ້ເຫັນວ່າ "ການພັທນາປະເທດຊາດ ໃຫ້ມີຄວາມກ້າວໜ້າທັນສມັຍ ໄດ້ຢ່າງຍືນຍົງນັ້ນ, ຕ້ອງພັທນາຄົນທີ່ທຸກຍາກ ດ້ອຍໂອກາດນັ້ນ ເສັຽກ່ອນ ແລະ ມັນຍັງບົ່ງບອກເຖິງ ທິດທາງໃໝ່ ໃນການພັທນາປະເທດຊາດ ຂອງເສຣີປະຊາທິປະໄຕລາວອີກດ້ວຍ".**

ປະກົດການອີກອັນນຶ່ງທີ່ທຸກຄົນລືມບໍ່ໄດ້ ກໍຄື: ການຊ່ວຍເຫລືອ ຂອງບັນດາປະເທດເພື່ອນມິຕ ໃນທົ່ວໂລກ ໃຫ້ລາວໄດ້ເປັນເຈົ້າພາບ ຊີເກມ ຄັ້ງທີ 25 ນີ້. ງານນີ້, ນອກຈາກ ມີເປົ້າໝາຍ ສົ່ງເສີມການຮ່ວມມື, ຄວາມເຂົ້າອົກເຂົ້າໃຈ ແລະເພີ້ມພູນຄວາມສັມພັນ ລະຫວ່າງປະເທດ ໃນພາກພື້ນເອເຊັຽ ຕາເວັນອອກສ່ຽງໃຕ້ແລ້ວ, ກໍຍັງເພີ້ມພູນ ຄວາມເຂົ້າອົກເຂົ້າໃຈ ເຖິງກິດເກມ ເກມກິລາ, ແມ່ນກະທັ້ງ ເກມການເມືອງ ກໍເຊັ່ນດຽວກັນ, ມີໄດ້ ມີເສັຽ ຫລືບາງຄັ້ງ ກໍຈາວກັນ. ສນັ້ນ, ບໍ່ຄວນຈະຕິດໃຈຈົນເກີນໄປ!.

ທ່ານ ສົມສວາດ ເລັ່ງສວັດ ປະທານຈັດງານຊີເກມ ໄດ້ກ່າວ ໃນເວລາເປີດພິທີ, ທ່ານຍໍ້າເຖິງ ປວັດຄວາມເປັນມາ ຂອງຊີເກມວ່າ "ໃນເດືອນ ມິຖຸນາ 1959 ສະຫະພັນກິລາຊີເກມ ໄດ້ຮັບການສ້າງຕັ້ງຂຶ້ນ ມີ 6 ປະຊາຊາດເອເຊັຽ ຕາເວັນອອກສ່ຽງໃຕ້, ຊຶ່ງໃນນັ້ນ ກໍມີລາວເຮົານຳດ້ວຍ". ອັນນີ້, ມັນກໍເປັນນິມິຕໝາຍອັນດີ ທີ່ທ່ານ ຍັງຮັບຮູ້ຜົນງານ ດ້ານຕ່າງປະເທດ ຂອງຄົນລາວຣະບອບເກົ່າ ແລະໄດ້ສືບຕໍ່ ເຮັດໃຫ້ອິດທິພົນຂອງງານ ມະຫາກັມຊີເກມ ທີ່ພັກຣັດ ສປປລາວ. ເປັນເຈົ້າພາບ, ທຳລາຍພາບພົດ ວັນຊາດ 2 ທັນວາ ມະຫາອຸບາດນີ້ ໃຫ້ພັງທະລາຍລົງ ໄດ້ຢ່າງສິ້ນເຊີງ!. -ເມື່ອ 37 ປີກ່ອນໜ້ານີ້, (1972-2009) ຫລັງຈາກກິລາ **"ປິງປ້ອງ"** ເກີດຂຶ້ນຢູ່ປະເທດຈີນ, ຄວາມສງົບຢ່າງມີກຽດ ກໍມີຂຶ້ນ (Peace with Honor) ແລະ ສົງຄາມ ວຽດນາມ ກໍຢຸດຕິລົງ. – **ພວກເຮົາຫວັງວ່າ**

ຫລັງຈາກງານຊີເກມຄັ້ງທີ 25 ໄດ້ຜ່ານພົ້ນໄປ...ສິດທິເສຣີພາບອັນແທ້ຈິງ ແລະສັນຕິສຸຂ ອັນຍາວນານ ກໍຈະກັບຄືນມາສູ່ຊາດລາວຄືນລາວອີກ ເໝືອນເດີມ.

ເຖິງຢ່າງໃດກໍດີ, ປີໃໝ່ 2010 ເຂົ້າມານີ້, ພວກເຮົາ ຂໍໃຫ້ການສ້າງຄວາມສາມະຄີປອງດອງຊາດ ຈົ່ງເກີດມີຂື້ນ ຢ່າງເປັນຮູບພຣະທັມ ຕາມທີ່ສາກົນ ໄດ້ກຳນົດໄວ້.

-ພວກເຮົາ ບໍ່ເຫັນວ່າ ພັກຣັດ ຈະມີເຫດຜົນອັນໃດ ມາປະຕິເສດ ໃນການອອກມາໂອ້ລົມກັບ ພວກເຮົາ, ໃນເມື່ອ ທຸກຢ່າງເອື້ອອຳນວຍໃຫ້ໝົດແລ້ວ.

ພວກເຮົາເຫັນວ່າ, ແມ່ນກະທັ່ງ ຊື່ຂອງການຈັດຕັ້ງ ກໍມີນ້ຳໜັກກ້ຳເກິ່ງ ແລະ ຊັ່ງຊາກັນໄດ້. ພັກປະຊາຊົນ ປະຕິວັດລາວ, ກໍເປັນຜູ້ຕາງໜ້າ ຂອງປະຊາຊົນລາວປະຕິວັດ. ພວກເຮົາ ປະຊາຊົນ ພັກແລະກຳລັງທັບ ເສຣີ ປະຊາທິປະໄຕລາວ ກໍເປັນຜູ້ຕາງໜ້າຂອງປະຊາຊົນລາວ ທີ່ຖືກຕັດສິດທິ ເສຣີພາບທຸກຢ່າງ. ໃນເມື່ອປະຊາຊົນ ທັງສອງຝ່າຍ ເກີດມີຄວາມຂັດແຍ່ງກັນ, ພວກເຮົາຊຶ່ງເປັນຜູ້ ຕາງໜ້າຂອງປະຊາຊົນ ແຕ່ລະຝ່າຍ ກໍຕ້ອງ ອ່ວຍໜ້າເຂົ້າມາ ແກ້ໄຂບັນຫານັ້ນຮ່ວມກັນ, ອັນນີ້, ມັນກໍເປັນການຖືກຕ້ອງທີ່ສຸດແລ້ວ ສຳລັບ ປະຊາຊົນ ລາວທັງຊາດ!.

ສຸດທ້າຍນີ້, ພວກເຮົາ ຂໍໃຫ້ບັນດາທ່ານ ຜູ້ມີກຽດທຸກໆທ່ານ ແລະ ພໍ່ແມ່ພີ່ນ້ອງປະຊາຊົນລາວ ທຸກທົ່ວໜ້າ ທັງໃນແລະນອກປະເທດ ຈົ່ງໄດ້ຊ່ວຍກັນຕໍ່ສູ້ ເພື່ອຄວາມເປັນຊາດ ເອກຣາດ ຂອງພວກເຮົາ ຕາມແນວທາງສັນຕິວິທີ; ເພາະມີແຕ່ການແກ້ໄຂບັນຫາລາວ ຕາມແນວທາງ ສັນຕິວິທີເທົ່ານັ້ນ, ຈຶ່ງຈະ ນຳໄປສູ່ການແກ້ໄຂບັນຫາຊາດ ໃຫ້ພົ້ນພັຍພິບັດຄັ້ງນີ້ໄດ້.

ປະຊາຊົນ ມີໄຊຍ໌ ເສຣີປະຊາທິປະໄຕ ອິງອາດ ຊາດລາວ ຈົ່ງຈເຣີນ.

ຂໍຂອບໃຈ.

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**
**ຫ້ອງການປະທານພັກ**
**ອາຈານ ສົມນຶກ ຟອງສູວັນ**
**ວັນທີ ໐໑ ມົກະຣາ ໒໐໑໐.**